


Roman lao de Thong Oup Moun : Le journal intime perdu dans le tas de poubelle.

ກ່ອນມື້ກ່ອນນີ້ກໍຮ້ອນ ....

ມື້ກ່ອນນີ້ກໍຮ້ອນ ....

ມາມື້ວານນີ້ກໍຍັງຮ້ອນ ....

ຕົກມາຮອດມື້ນີ້ແລ້ວ ກະຍັງຮ້ອນຄືເກົ່າ ....

ແລ້ວມື້ ....

ແຕ່ສຳລັບມື້ນີ້ມັນຮ້ອນ .... ຮ້ອນເປັນພິເສດ ຮ້ອນເອົາແທ້ເອົາວ່າ ຮ້ອນຈົນເຮັດໃຫ້ເຮົາ ບໍ່ຢາກເຮັດຫຍັງ ຮ້ອນຈົນມີເຣື່ອງນ້ອຍ ໆ ກະຄືຊິເຮັດໃຫ້ເປັນເຣື່ອງໃຫຍ່ໄດ້ງ່າຍ ໆ ຮ້ອນແບບນີ້ ຖ້າມີເງິນຊື້ເຄື່ອງ ເຮັດອາຍເຢັນ ມາຕິດເຮືອນ ຫຼື ແມ່ນຫມາກປີ່ນລົມທັມມະດາ ຄືຊິວິເສດ ....

" ເຊົາ ! "

ບອກຕົນເອງໄດ້ທັນທີວ່າ " ບໍ່ ຕ້ອງຄິດ .... "

ເຮັດການທ້ອນເທມິດຊີວິດ ແບບບໍ່ ຊື້ຫຍັງໃສ່ທ້ອງ ກະຄືຊິບໍ່ມີທາງດອກ ....

ອາກາດມື້ນີ້ມັນຮ້ອນ ຮ້ອນຈົນຢາກຮ້າຍ ຢາກຕີໄປຫມົດທຸກແນວພຸ້ນລະ .... ຢາກໃຫ້ເຝື່ອ ໃຫ້ຝົນ ທີ່ບໍ່ມາ ບົດບັງຕາເວັນ ໃຫ້ຈັກດີ້ .... ຢາກຮ້າຍໃຫ້ລົມໃຫ້ແລ້ງ ທີ່ຮອດຍາມແລ້ວ ຍັງບໍ່ພັດມາ.... ບາດຍາມຫນາວເອົາດີແທ້ ໆ .... ຢາກຮ້າຍໃຫ້ຮອດບ້ານທີ່ມັນຫຼັງນ້ອຍຈົນບໍ່ມີບ່ອນຊຸ້ນແດດ... ຢາກຮ້າຍໃຫ້ວັນເວລາ ທີ່ຕົກມາເປັນ ເດືອນ ຫ້າ ຮ້ອນພິລຶກ .... ສຽງແມ່ເພິ່ນຈົ່ມຢູ່ຫຼັງບ້ານ.... ກະຈົ່ມເຣື່ອງຮ້ອນຄືກັນຫັ້ນລະ....

" ຈັ່ງແມ່ນມັນຮ້ອນເອົາກະດໍ ກະເດັ້ງນໍ ຟ້າດິນນີ້ກະດາຍ ....ຮ້ອນແບບນີ້ມັນຊິບໍ່ຕາຍກັນ ເທມິດເມືອງ ພູ້ມຫວາຄົນ ? "

ທີ່ຈິງເຮົາກໍໄດ້ຍິນເພິ່ນຈົ່ມ ແບບນີ້ມາຕັ້ງແຕ່ເຮົາຈື່າຄວາມໄດ້ພູ້ນລະ ຫຼື ອາດຊິຕັ້ງແຕ່ເຮົາບໍ່ທັນຈື່ຄວາມກະ ເປັນໄດ້ ແລ້ວອາກາດເມືອງລາວ ມັນກະຮ້ອນມາແບບນີ້ ມາແຕ່ໃດ ແຕ່ໄລ ແຕ່ກະບໍ່ເຫັນໃຜຕາຍ ແລ້ວແມ່ເພິ່ນກະ ຈົ່ມແບບນີ້ມາເລື້ອຍ ໆ ຈົນວ່າເຮົາຕົກໃຈ ຄຶດວ່າ ມັນເປັນປີຈັ່ງໃຊ !

ມື້ນີ້ ອາກາດມັນຮ້ອນ.... ຮ້ອນຈົນບັງຄັບໃຫ້ເຮົາມານັ່ງຕາກລົມບັງເງົາເຮືອນ.... ຈົ່ງດ່າຄວາມຮ້ອນຢູ່ໃນອົກ ໃນໃຈ ຈົນຄວາມຮ້ອນເຮັດໃຫ້ເຮົາຫຼັບເຊືອບໄປເທິງເຕີບ.... ຕື່ນຂຶ້ນມາກໍຍ້ອນສຽງຄົນຮ້ອງຊື້ແກ້ວເປົ່າ....

ບ໋າ ! ແກ້ວເປົ່າເຮົາກະມີຫຼາຍເຕີບ ເອົາໄວ້ກະບໍ່ມີປໂຍດຫຍັງ ຄັນຂາຍໄດ້ ໗໐-໘໐ ກະຊິໄດ້ກິນຊາເຢັນ

ຍ້ອນໃດ໊ !

ເຮົາຄິດ.... ຕັດສິນໃຈຮ້ອງຄົນຊື້ແກ້ວເຂົ້າມາຕໍ່ກາລິງຣາຄາ....ຕອນຄົນຊື້ແກ້ວ ຊິຫນີຈາກ ຕາເຮົາໂລດເສືອດ

ໄປ ເຫັນ ປື້ມປົກສີແດງເກົ່າ ໆຫົວນຶ່ງ ເປັນປື້ມແບບບັນທຶກ ຄວາມຈື່ຄວາມຈຳ ທຳນອງນັ້ນແຫຼະ ຖິ້ມຢູ່ກະຕ່າໃຫຍ່ ຂອງຄົນຂາຍແກ້ວ ເຮົາຈັບຂຶ້ນມາເບິ່ງ ເຫັນຂຽນໄປແຕ່ສິບຊາວໃບ ກະເລີຍຂໍຊື້ ເຮົາຈ່າຍຄ່າປື້ມແຕ່ຊາວກີບ ເພາະມັນ ເກົ່າແລ້ວ ອີ່ຕານັ້ນເລົາກໍ ໄປຄຸ້ຍເຂັ່ງຈາກກະຖັງຂີ້ເຫຍື້ອ ມາລ້າ ໆ .... ເຊັດຝຸ່ນ ອອກຈາກປົກປື້ມດີແລ້ວ ເຮົາກໍປຶດ ຫນ້າທຳອິດ ອອກອ່ານແກ້ຮ້ອນໃນລອງເບິ່ງ.... ທາງໃນມີບັນທຶກແບບຄົນລາວ ທີ່ບໍ່ເກັ່ງຝຣັ່ງປານໃດວ່າ....

## ໑ ກັນຍາ ຝົນ

### ມື້ນີ້ ອອກໄປກິນເຂົ້າ ຮ້ານແຖວຫນ້າບ້ານ....

ບັກສິງ ເດັກນ້ອຍເຮືອນໃກ້-ແນະນຳໃຫ້ຮູ້ຈັກຄົນງາມນາງນຶ່ງ.... ນາງຊື່ຈັນຫອມ.... ໄດ້ຍິນຫວິດ

ແຫວວວ່າ ຫອມເຮັດການຂາຍອາຫານຢູ່ແຖວໂຮງຊິເນໃນເມືອງ .... ຫອມຍິ້ມກະງາມ.... ຕາຫອມກະຫວານ.... ເນື້ອຫນັງຫອມແຮ່ງງາມ.... ຫອມງາມໄປເຫມິດທຸກບ່ອນຫັ້ນແຫຼະ....

ມື້ນີ້ ອາຫານແຊບທີ່ສຸດ ມື້ນີ້ມີສາມຄົນ ຫອມ ເຮົາ ແລະ ບັກສິງ ເຮົາຈ່າຍຄ່າອາຫານ ກັບເຄື່ອງດື່ມໄປເຫມິດ

໓໐໐ ກີບ .... ແລກກັບການຮູ້ຈັກຄົນງາມ ເຮົາວ່າບໍ່ແພງເລີຍ....

ອູ່ຍຕ໊າຍ ຕາຍ .... ເຮົາລືມນັດນາງຊ້ຳ.... ນາງຊິມາຮ້ານນີ້ອີກບໍ່ມື້ອື່ນ ນະ....

## ໔ ກັນຍາ ຝົນ

ມື້ຄືນນີ້ ນອນຫຼັບ ໆ ຕື່ນ ໆ .... ມາຫຼັບແຈບເອົາຕອນເກືອບແຈ້ງ....
ຝັນວ່າໄດ້ກອດຫອມ....ຝັນໄປຫຼາຍອັນຫຼາຍແນວ....ຝັນໂລ ໆ ເລ ໆ ....ຝັນ....ຈົນໄດ້ອາບນ້ຳຕອນເຊົ້າ....

ອີດນອນເມື່ອຍ ຈົນຕ້ອງບຳຣຸງກາຍດ້ວຍໄຂ່ລວກໄປຕັ້ງ ໔-໕ ຫນ່ວຍ ຕື່ມວິຕາມິນເບັງອີກສອງແກ້ວ....

ເບິ່ງໂມງເທື່ອທຳອິດເປັນເວລາ ໙:໓໐....ເທື່ອທີ່ສອງ ໙:໓໕.... ເທື່ອສາມ ໙:໔໐....ເບິ່ງເທື່ອທີ່ສິບຫ້າ

໑໑:໕໑.... ປານໃດນໍ ຊິໄດ້ເລີກການ....

ມື້ນີ້ ຫອມມາກັບໜຸ່ມສອງຄົນ.... ຫອມຮ້ອງເຮົາໄປກິນນຳ.... ຄວາມລຶ້ງເຄີນຮັກແກ່ນຣະຫວ່າງຫອມກັບເຮົາຫຼາຍຂຶ້ນ.... ຫອມຍິ້ມໃຫ້ເຮົາ ເຮົາຍິ້ມໃຫ້ຫອມ ຈົນເມື່ອຍເອັນຄ້າງ.... ມື້ນີ້ເຮົາຈ່າຍໄປ ໓໐໐...ກ່ອນຈາກເຮົານັດຫອມເບິ່ງຊີເນ ໂຮງໃດກະໄດ້ ມື້ອື່ນແລງ....

## ໓ ກັນຍາ ຜົລ (໗:໐໐ ໂມງແລງ)

ມື້ນີ້ເປັນວັນທິດ.... ເຮົາອາບນ້ຳແຕ່ງໂຕຢ່າງສຸດໃຈ....ເຮົາຖ້າຢູ່ຈັກສິບຫ້ານາທີ ຫອມກະມາຮອດ

ຈັນຫອມ ແຕ່ງໂຕແລ້ວແຮ່ງຕື່ມງາມ ງາມກວ່າຕອນໃສ່ຊຸດເຮັກວຽກຕັ້ງສິບສອງຕໍ່ ....

ກະປິ່ງຫອມກາຍຫົວເຂົ່າຂຶ້ນເມືອຕັ້ງຄືບ ຈົນຫົວໃຈເຮົາຫົກຫວາມປານຕົກຍົນ.... ເສື້ອຫອມ ກະໃສ່ ບ໊າງບາງ.... ບາງຈົນ ເກືອບເຮົາເຫັນຊອດ....

ຫອມກັບເຮົານັ່ງຊັ້ນເທິງ.... ຄົນບໍ່ແຫນ້ນ.... ຊິເນບໍ່ຮູ້ວ່າເຣື່ອງແບບໃດ ເພາະຫອມກັບເຮົາບໍ່ສົນໃຈເບິ່ງ....

ຄືນນີ້ ເຮົາຈ່າຍອີກ ໙໕໐....

ກາມະເທບ.... ກະຣຸນາຍິງສອນໃຫ້ຖືກເປົ້າຫມາຍໃຫ້ຂ້າໄວ ຜູ່ ໆ ແດ່ທ້ອນ....

## ໔ ກັນຍາ ຜົລ

ພໍຫ້າໂມງເປາະ ເຮົາໂດດອອກຈາກຫ້ອງເຮັດການມາຖ້າເອົາຈັນຫອມ ຊ້ອນທ້າຍຣົດຈັກ ໄປກິນນ້ຳຫມາກນາວຢູ່ທາງແບ່ງ ແລ້ວເລີຍໄປນັ່ງຄຸຍກັນຢູ່ແຄມທ່າວັດຈັນ ຜູ່ຄົນຮູ້ສຶກບາງຕາ.... ແລ້ວພວກເຮົາກະກັບມາກິນອາຫານໃນເມືອງອີກເລັກນ້ອຍ.... ມື້ນີ້ ຈ່າຍອີກ ໙໐໐.... ຢາກບອກໃຫ້ໃຜຜູ້ນຶ່ງຮູ້ເດ້ວ່າ ເຮົາຮັກຈັນຫອມເຂົ້າແລ້ວ.... ຮັກແບບຫຼົງເລີຍລະ !!!!

## ໕ ກັນຍາ ຜົລ

ມື້ນີ້ ຊວນຈັນຫອມໄປຫຼິ້ນຫາດດອນຈັນ.... ຊື້ມັນເຜົາ....ຫມາກທັນ ກິນກັນຈົນອີ່ມຕາງເຂົ້າ ຕອນຊິກັບ ຈັນຫອມຍັງຊວນກິນອາຫານຢູ່ຫັ້ນອີກຊ້ຳ.... ຕອນຍ່າງຂ້າມຂົວ ເຮົາລອງຈັບມືຈັນຫອມ.... ຈັນຫອມບໍ່ວ່າຫຍັງ ແຕ່ຍິກເຮົາຄ່ອຍ ໆ .... ຈັນຫອມຍິກບໍ່ເຈັບຈັກດີ້.... ຂີ່ນແທກຊີ້ເຂົ້າເມືອງ ເຮົາລັກດົມແກ້ມຈັນຫອມໄດ້ເທື່ອນຶ່ງ.... ເທື່ອສອງບັກແທ້ກຊີ້ ເບິ່ງມາທາງກະຈົກ ມັນຍິ້ມ ໆ ເຮົາເລີຍອາຍ....

ມື້ນີ້ ຈ່າຍໄປອີກ ຝ໕໐.

## ຝ ກັນຍາ ຝົລ

ພໍ້ ກັນຕາມນັດ ໕ ໂມງແລງ.... ຊວນຈັນຫອມກິນເຂົ້າກິນເບັ້ຽຢູ່ແຄວຫນອງດ້ວງ....ທັງຊວຍທັງຊົ່ວ ເຮົາເມົາຫຼັບຄາຕັກຈັນຫອມ ເທິງແທກຊີ້ຈົນຮອດເຮືອນ....

ມື້ນີ້ ຈ່າຍອີກ ໑.໔໐໐....

## ໓ ກັນຍາ ຝົລ

ມື້ນີ້ວັນທີ ໓ ເງິນເດືອນເຮົາ ໑໐.໐໐໐ ຫມົດກ້ຽງຮວມທັງຂອງເກົ່າທີ່ທ້ອນໄວ້.... ຢືມກັບຄົນຮູ້ຈັກໄວ້ອີກ ໓.໐໐໐ ເຂົາເອົາດອກ ຮ້ອຍລະຊາວ ຖານຄົນຮັກແພງຊິ້ນໄປປາມາ ກະຊ່າງມັນ !

ພໍ້ ຈັນຫອມຕອນເພນ ເຫັນຕາແດງ ໆ ຫອມບອກວ່າ ແມ່ເຈັບບໍ່ມີເງິນ ເຮົາເລີຍຊ່ອຍໄປ ໔.໐໐໐ ເຮົາດູຕົນຈັນຫອມຈົນສຸດຫົວໃຈ ຫອມດຶງມືເຮົາມາກຳໄວ້.... ຮູ້ສຶກມີຄວາມສຸກຢ່າງປລາດ.... ປລາດອີ່ຫຼີ !!!

## ໗ ກັນຍາ ຝົລ

ມື້ນີ້ ຂາຍໂມງຢູ່ແຂນໄປ ໑໐.໐໐໐ ແລ້ວຊື້ແນວ ໔.໐໐໐ ໃສ່ ແນວບໍ່ດີປານໃດ ແຕ່ຮູບຊົງມັນຄື ໆ ກັນ ຄັນບໍ່ສັງເກດຄືຊິບໍ່ຮູ້

ພໍ້ ຈັນຫອມ ຈັນຫອມບອກວ່າ ໃຫ້ຫາບ່ອນມິດ ໆ ຄຸຍກັນດີກວ່າໄປໄກ ໆ... ເຮົາເລີຍພາຈັນຫອມແອະ

24 / VII
ห้ามจำหน่าย

ເຮືອນນ້ອຍຢູ່ໃສກະຊ່າງ...

ໂຊກຊ່ວຍ.... ແກ້ມຈັນຫອມ ຫ໊ອມ ຫອມ

ໂຊກ.... ຈັນຫອມ ມີຂີ້ແມງວັນຢູ່ເອິກນຳ

ໂຊກ.... ເຮົາໄປສົ່ງຈັນຫອມ ກັບບ້ານເກືອບສອງໂມງກາງຄືນ ແລະ ນັ່ງຈົດບັນທຶກຢູ່ເກືອບເປັນລົມແລ້ວ.... ເງິນເຮົາເຫຼືອແຕ່ ໘.໐໐໐

## ໙ ກັນຍາ ຝົນ

ຕອນເຊົ້າໄປຖ່າຍເບົາຮູ້ສຶກເຈັບ ໆ ແສບ ໆ....

ຕອນບ່າຍ ຮູ້ສຶກເປັນໄຂ້ຄືງຫນາວ ໆ ຮ້ອນ ໆ ....

ເຮົາຕ້ອງຂາດການ... ຢູ່ເຮືອນ.... ຂນະທີ່ຂຽນບັນທຶກນີ້ ຮູ້ສຶກຂັດເຫງົ້າຂາ ເປັນຫຍັງຕອນໃດກະບໍ່ຮູ້.... ຮູ້ສຶກແສບທຸກເທື່ອທີ່ຖ່າຍເບົາ ແລ້ວກະຖ່າຍດຸຊ້ຳ....

## ໑໐ ກັນຍາ ຝົນ

ເຮົາບໍ່ປາກໄປຖ່າຍເບົາເລີຍ.... ປວດແສບຈົນເຫຼືອທົນ.... ໂອ້ຍ ເທວະດາຟ້າດິນ.... ເງິນກໍຫມົດ !

## ໑໑ ກັນຍາ ຝົນ

ຕອນເຊົ້າເຂາະຂອດທຸກສິ່ງທຸກຢ່າງໄປຂາຍ ແລ້ວໄປຫາຫມໍ ຫມໍບອກວ່າບໍ່ເປັນຫຍັງ ນອກຈາກສັກຢາ ແລະ ໃຫ້ກິນຢາ.... ແຖມຫ້າມກິນຕົ້ມໄກ່ ແລະ ໆລໆ ບໍ່ຮູ້ວ່າມັນຜິດຫຍັງ ? ....

## ໑໒ ກັນຍາ ຝົນ

ດຽວນີ້ ເຊົາດີແລ້ວ.... ຂາຍສ້ອຍຄໍແມ່ຊື້ໃຫ້ໄປ ໑໗.໐໐໐ກວ່າກີບ.... ຫມໍອະນຸຍາດໃຫ້ກິນໄດ້ທຸກແນວ....

ຕອນເຊົ້າໄປເຮັດການ....ຕອນເພນ ບໍ່ກ້າໄປພົບຈັນຫອມ.... ຕອນແລງຈັນຫອມມາຖ້າຢູ່ຫນ້າໂຮງການ.... ເຮົາເລີຍເປີດອອກທາງຫຼັງໂຮງການ ເພາະຢ້ານຕິດໄຂ້ຈາກນາງອີກ....

## ໔໖ ກັນຍາ ຝົນ

ຈັນຫອມກັບເຮົາບໍ່ໄດ້ພໍ້ ກັນອີກເລີຍ.... ບັກສິງອີກນັ້ນແຫຼະໂຕການ ມາຊວນໄປທ່ຽວບຸນວັດຫນອງ ດ້ວງ.... ມ່ວນກັນຈົນເດິກ.... ກິນເຫຼົ້າເມົາເບັ່ງຈົນຮອດບ່າຍໂມງກາງຄືນ....

ບັກສິງຊວນໄປທ່ຽວເຮືອນຫມູ່ແຖບນັ້ນແຖບນີ້.... ມັນມືດແດ່ ພະສົມກັບຄວາມເມົາແດ່ ເຮົາເລີຍບໍ່ຮູ້ເປັນ ເຮືອນໃຜຕໍ່ໃຜ.... ບັກສິງຊຸກຫຼັງເຮົາເຂົ້າຫ້ອງນ້ອຍ ໆ ມືດ ໆ ຫ້ອງນຶ່ງ ເຮົາຄວາໄປເປີດໄຟ.... ເກືອບ "ຊັອກ" ຕາຍ ຈັນຫອມນັ້ນເອງ.... ນາງແລ່ນເຂົ້າມາກອດເຮົາ.... ຕໍ່ວ່າຕໍ່ຂານເຮົາເປັນການໃຫຍ່.... ຫາວ່າເຮົາທຳລາຍແລ້ວ ຖິ້ມຫນີ ຄືຫມູ ຄືຫມາ....

ເຮົາຖຽງຄືນວ່າ ນາງເຮັດໃຫ້ເຮົາເຈັບປວດຢູ່ເປັນອາທິດ ສອງອາທິດ.... ນາງບໍ່ເຊື່ອ.... ນາງທ້າເຮົາພິສູດ.... ເຮົາຕົກລົງ ເຮົາຫວັງຊິຂ້ານາງໃຫ້ຕາຍ ຊິຂ້າແບບເລືອດເຢັນ ໆ .... ແຕ່ຈັນຫອມທົນກວາເຮົາ ທົນກວ່າເຮົາຄຶດ.... ເຮົາເລີຍຕື່ນຂຶ້ນມາເປັນຕອນເຊົ້າ ພໍ້ ໂຕເອງຢູ່ບາຣ໌.... ເງິນບໍ່ມີຕິດຢູ່ຖົງສັ້ງ.... ເອີ້.... ມີ ໕໐ ກີບ ຢູ່ຫນ້າໂຕະເຄື່ອງ ແປ້ງ.... ຄືຊິແມ່ນຈັນຫອມ ເຈຕນາລືມໄວ້ໃຫ້ເປັນຄ່າຣົດເມືອເຮືອນ....

## ໔໗ ກັນຍາ ຝົນ

ບັນທຶກທີ່ຮັກ....ຕໍ່ໄປນີ້ ເຮົາຕ້ອງເຊົາບັນທຶກ ເພາະເຮົານອນລຸກບໍ່ຂຶ້ນ ຢູ່ໂອບີ... ຫມໍບອກວ່າ ເຮົາເປັນຝີຫມາກມ່ວງ.... ຕ້ອງຖ້າການຜ່າຕັດ.... ຫມໍວ່າ ມີຫວັງໄດ້ ໄປທ່ຽວ ທາງພາກເຫນືອຂອງຍີ່ປຸ່ນຄັກ ໆ....

ເຮົາເປີດຫນ້າຕໍ່ໄປ ແຕ່ບໍ່ພາກົດມີໂຕອັກສອນຊາດໃດ ພາສາໃດ ພາກົດຢູ່ອີກ ເຮົາກະເລີຍຈົນໃຈ ບໍ່ຮູ້ສິສົ່ງຄືນໄປໃຫ້ ໃຜໄດ້ ຈຶ່ງຂໍຮ້ອງໃຫ້ຍາອ້າຍປາໄນ ພິມລົງໃນປຶ້ມຫົວນີ້ໃຫ້ ຖ້າໃຜໄດ້ອ່ານແລ້ວຮູ້ສຶກວ່າ ເປັນບັນທຶກຂອງໂຕເອງ ກະມາຮັບເອົາໄປຂຽນຕໍ່ໃຫ້ມັນສຸດໄດ້ໂລດ....

ຢ່າອິດແນວບັນທຶກຫຼາຍ !!!!